ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 1192 /ຄຊລ

ນະຄອນຫລວງວຽງຈັນ, ວັນທີ : ໒໔ ມີນາ ໒໐໒໓

ກະຊວງການເງິນ

ກົມຄຸ້ມຄອງຊັບສິນຂອງລັດ

Credit No. IDA 6606-LA

Project ID No. P173817

ແຫລ່ງທຶນ: ກູ້ຢືມຈາກທະນາຄານໂລກ

ຊື່ຂອງສັນຍາ: ການຈັດຊື້ອຸປະກອນຫ້ອນໂຮມຂີ້ເຫຍື້ອ

ເລກທີອ້າງອີງ. National – RFQ -AF-G-23

- ອີງຕາມ ຂໍ້ຕົກລົງວ່າດ້ວຍການອະນຸມັດໃຫ້ດຳເນີນການຈັດຊື້ອຸປະກອນ, ເຄື່ອງມືທີ່ຈຳເປັນ ແລະ ຕູ້ສຳເລັດຮູບສຳລັບຫ້ອນໂຮມຂີ້ເຫຍື້ອສະໜອງໃຫ້ສະຖານທີ່ບໍລິການສາທາລະນະສຸກ ສະບັບເລກທີ 0116/ກງ, ລົງວັນທີ 19 ມັງກອນ 2023

1. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຮັບທຶນກູ້ຢືມຈາກທະນາຄານໂລກ ເພື່ອໃຊ້ຈ່າຍສຳລັບ ໂຄງການກັນ, ຄວບຄຸມ ແລະ ຕອບໂຕ້ການລະບາດຂອງພະຍາດ COVID-19 ຢູ່ ສປປ ລາວ, ແລະ ມີຈຸດປະສົງນຳໃຊ້ສ່ວນໜຶ່ງຂອງທຶນເຂົ້າໃນລາຍຈ່າຍຂອງສັນຍາ Financing Agreement ສຳລັບ Credit No.6606-LA ລົງວັນທີ 07 ເມສາ 2020
2. ຄະນະສະເພາະກິດ ເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂການລະບາດພະຍາດ COVID-19 ຂໍເຊີນບັນດາບໍລິສັດທີ່ສົນໃຈ, ມີຄຸນນະວຸດທິເໝາະສົມ ແລະ ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງກັບການສະໜອງສິນຄ້າດັ່ງກ່າວ ເຂົ້າຮ່ວມປະມູນສຳລັບການປະມູນຈັດຊື້ອຸປະກອນ, ເຄື່ອງ ມືທີ່ຈຳເປັນ ແລະ ຕູ້ສຳເລັດຮູບສຳລັບຫ້ອນໂຮມຂີ້ເຫຍື້ອສະໜອງໃຫ້ສະຖານທີ່ບໍລິການສາທາລະນະສຸກເພື່ອຮັບໃຊ້ເຂົ້າໃນວຽກງານປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ດ້ວຍການດຳເນີນການປະມູນໃນຮູບແບບສົມທຽບລາຄາພາຍໃນ, ໄລຍະການຈັດສົ່ງສິນຄ້າແມ່ນ 60 ວັນ
3. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນແບບສົມທຽບລາຄາພາຍໃນຕາມທີ່ໄດ້ລະບຸໄວ້ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດສະບັບເລກທີ 0477/ກງ ລົງວັນທີ 13 ກຸມພາ 2019
4. ບໍລິສັດທີ່ມີຄວາມຕ້ອງການເອກະສານປະມູນຄົບຊຸດຕ້ອງຍື່ນໜັງສືສະເໜີຫາຄະນະຮັບຜິດຊອບການຈັດຊື້-ຈັດຈ້າງ ສູນສະໜອງຢາ-ອຸປະກອນການແພດ ກະຊວງສາທາລະນະສຸກ ແຕ່ວັນຈັນ ເຖິງ ວັນສຸກ 8:00 ໂມງເຊົ້າ ເຖິງ 16:00ໂມງແລງ ຕາມໂມງລັດຖະການ.
5. ບໍລິສັດທີ່ມີຄວາມເໝາະສົມ ສາມາດຮັບເອກະສານປະມູນຄົບຊຸດເປັນພາສາລາວ ໂດຍຍື່ນໜັງສືຫາທີ່ຢູ່ຂ້າງເທິງນີ້ເລີ່ມແຕ່ວັນທີ ........................ ເປັນຕົ້ນໄປ ໂດຍບໍ່ໄດ້ເສຍຄ່າຊື້ຊອງໃດໆ.

6. ຊອງປະມູນຈະຕ້ອງສົ່ງທີ່ຢູ່ຄືດັ່ງນີ້, ຄະນະຮັບຜິດຊອບການຈັດຊື້ຈັດຈ້າງ ເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂການລະບາດພະຍາດ COVID19 ກະຊວງສາທາລະນະສຸກຕຶກໃໝ່, ຫ້ອງປະຊຸມຊັ້ນ 06, ມີທີ່ຕັ້ງຢູ່ຖະໜົນຟ້າງູ່ມ , ບ້ານທາດຂາວ, ເມືອງສີສັດຕະນາກ, ນະຄອນຫລວງວຽງຈັນ. ໃນ ຫລື ກ່ອນເວລາ 14 :00ໂມງ ຂອງວັນທີ …………………….. ການສົ່ງດ້ວຍລະບົບເອເລັກໂຕຼນິກຈະບໍ່ອະນຸຍາດ. ຊອງປະມູນທີ່ສົ່ງຊ້າ ຈະຖືກປະຕິເສດ. ການເປີດຊອງປະມູນຈະເປີດຕໍ່ໜ້າສາທາລະນະໂດຍຊ່ອງໜ້າຜູ້ຕາງໜ້າຂອງຜູ້ປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກ ຄົນອື່ນທີ່ສົນໃຈຢາກເຂົ້າຮ່ວມຢູ່ສະຖານທີ່ງກໍານົດໄວ້ຂ້າງລຸ່ມນີ້.
7. ທີ່ຢູ່: ຄະນະຮັບຜິດຊອບການຈັດຊື້-ຈັດຈ້າງເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະ ບາດພະຍາດ COVID-19, ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ, ຊັ້ນ III ຕຶກສ່ວຍສາອາກອນ ບ້ານໂພນໄຊ, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ ແລະ ສູນສະໜອງຢາ- ອຸປະກອນການແພດ ກະ ຊວງສາທາລະນະສຸກ, ບ້ານຊຽງດາ, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Tel: 020 94446289, 020 56264559, 020 55685783

ໂ ຫົວໜ້າກົມຄຸ້ມຄອງຊັບສິນແຫ່ງລັດ, ກະຊວງການເງິນ

**ຫົວໜ້າຄະນະວິຊາການຊ່ວຍວຽກຄະນະຮັບຜິດຊອບການຈັດຊື້-ຈັດຈ້າງວັດຖຸ ອຸປະກອນເຄື່ອງຮັບໃຊ້ວຽກງານປ້ອງກັນ ແລະ ແກ້ໄຂການລະບາດພະຍາດ COVID-19**

ທອງລິດ ກິ່ງແກ້ວອຸດົມ
Thonglith KINGKEOOUDOM